# ຈະເຊື່ອມວຽກງານບົດບາດຍິງ-ຊາຍ ເຂົ້າໃນການຄຸ້ມຄອງ ປ່າໄມ້ແບບຍືນຍົງໃນຂັ້ນຮາກຖານ ເພື່ອຫລຸດຜ່ອນຜົນກະທົບ ຈາກການປ່ຽນແປງດິນຟ້າອາກາດ ແນວໃດ?




Norad
RECOFTC
THE CENTER FOR PEOPLE AND FORESTS

แຜ່ນໂຄສະນາ ທີ 5:

# ຈະເຊື່ອມວຽກງານບົດບາດຍິງ-ຊາຍ ເຂົ້າໃນການຄຸ້ມຄອງປ່າໄມ້ແບບຍືນຍົງໃນຂັ້ນຮາກຖານ ເພື່ອຫລຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແນວໃດ?

## ເນື້ອໃນຂອງແຜ່ນໂຄສະນາ:

ການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນວຽກງານການຄຸ້ມຄອງປ່າໄມ້ແບບຍືນຍົງ ຈະຊ່ວຍແກ້ໄຂບັນຫາຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ໃນຮູບແບບທີ່ເທົ່າທຽມກັນ ເຊິ່ງຈະກໍ່ໃຫ້ເກີດຜົນໄດ້ຮັບສູງສຸດ ດ້ານສັງຄົມ ແລະ ສິ່ງແວດລ້ອມ.

## ຄໍາອະທິບາຍກ່ຽວກັບແຜ່ນໂຄສະນາ:

ເພື່ອສົ່ງເສີມການຄຸ້ມຄອງປ່າໄມ້ແບບຍືນຍົງ ທີ່ສາມາດຮັບມື ກັບການປ່ຽນແປງດິນຟ້າອາກາດ, ມີຫລາຍໆກິດຈະກໍາທີ່ຈະຕ້ອງເຮັດ ເຊັ່ນ: ຫລຸດຜ່ອນການທໍາລາຍປ່າໄມ້ ແລະ ຫລີກຫລ່ຽງການເຮັດໃຫ້ປ່າໄມ້ເສື່ອມໂຊມ, ປູກປ່າຄືນໃໝ່, ສົ່ງເສີມການອະນຸລັກຮັກສາປ່າໄມ້ ລວມທັງການຄຸ້ມຄອງປ່າໄມ້ທີ່ດີ. ເພື່ອເຊື່ອມບົດບາດຍິງ-ຊາຍ ເຂົ້າໃນວຽກງານການຄຸ້ມຄອງປ່າໄມ້ແບບຍືນຍົງ ເພື່ອຫລຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ທັງຜູ້ຍິງ ແລະ ຜູ້ຊາຍ ຈໍາເປັນຕ້ອງເຂົ້າຮ່ວມທຸກໆຂະບວນການ.

ແຜ່ນໂຄສະນານີ້ ສະແດງໃຫ້ເຫັນເຖິງການເຄື່ອນໄຫວທີ່ມີຄວາມເຂົ້າໃຈວຽກງານບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມ ຂອງຜູ້ຍິງ ແລະ ຜູ້ຊາຍ ເຂົ້າໃນຂະບວນຕ່າງໆໃນການຄຸ້ມຄອງປ່າໄມ້ແບບຍືນຍົງ ເພື່ອແກ້ໄຂຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ດັ່ງລາຍລະອຽດລຸ່ມນີ້:

1) **ການກໍານົດເປົ້າໝາຍ:** ໂດຍການຈັດກອງປະຊຸມປຶກສາຫາລືຂຶ້ນ, ທັງຍິງ ແລະ ຊາຍ ຄວນຈະມີໂອກາດເທົ່າທຽມກັນ ໃນການແລກປ່ຽນບັນຫາ ແລະ ປະກອບຄວາມຄິດເຫັນຂອງເຂົາເຈົ້າຕ້ອງມີກົນໄກທີ່ເໝາະສົມ ເພື່ອໃຫ້ຜູ້ຍິງ ສາມາດອອກສຽງ ແລະ ມີໂອກາດໄດ້ເວົ້າ ແລະ ສະເໜີບັນຫາຂອງເຂົາເຈົ້າໄດ້ ດ້ວຍການຈັດກຸ່ມແມ່ຍິງສະເພາະ ເພື່ອປຶກສາຫາລື ແລະ ສໍາພາດຕົວແທນແມ່ຍິງ, ເພື່ອສ້າງຄວາມເຂົ້າໃຈໃຫ້ແມ່ຍິງໃນບັນຫານັ້ນໆ ດີຂຶ້ນ, ໂດຍນໍາໃຊ້ວິທີການປະເມີນແບບມີສ່ວນຮ່ວມ (Participatory Rural Appraisal: PRA) ເພື່ອໃຫ້ເຂົ້າໃຈກ່ຽວກັບວຽກງານບົດບາດຍິງ-ຊາຍ ເພື່ອກະຕຸກຊຸກຍູ້ການມີສ່ວນຮ່ວມຂອງແມ່ຍິງ.

2) **ການວາງແຜນ:** ໃນຂະບວນການວາງແຜນ ເຊັ່ນ: ການວາງແຜນນໍາໃຊ້ທີ່ດິນ ແລະ ປ່າໄມ້ ຈະຕ້ອງປະສານສົມທົບຄວາມຮູ້ ແລະ ປະສົບການທີ່ກ່ຽວຂ້ອງກັບປ່າໄມ້ຂອງທັງຍິງ ແລະ ຊາຍ ຄວາມຄິດເຫັນ, ຄວາມຮູ້ ແລະ ປະສົບການຂອງແມ່ຍິງ ຕ້ອງໄດ້ຮັບການພິຈາລະນາ ແລະ ຍອມຮັບໃນການຈັດຕັ້ງປະຕິບັດກິດຈະກໍາ ເຊັ່ນ: ການແບ່ງເຂດແດນ, ການປັກຫລັກໝາຍເຂດແດນ, ການກໍານົດປະເພດການນໍາໃຊ້ທີ່ດິນ ແລະ ປ່າໄມ້, ກິດຈະກໍາທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້, ການສ້າງລະບຽບການຄຸ້ມຄອງປ່າໄມ້ ເປັນຕົ້ນ. ເນື່ອງຈາກວ່າຜູ້ຍິງອາໄສ ແລະຕິດພັນຢ່າງໃກ້ຊິດກັບປ່າໄມ້ ໃນການດໍາລົງຊີວິດປະຈໍາວັນ, ເພາະສະນັ້ນ ທຸກການປ່ຽນແປງ ແລະ ກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້ ລ້ວນແລ້ວແຕ່ຈະກະທົບໂດຍກົງຕໍ່ແມ່ຍິງຫລາຍກວ່າຜູ້ຊາຍ.

3) **ການຈັດຕັ້ງປະຕິບັດກິດຈະກໍາການຄຸ້ມຄອງປ່າໄມ້:** ໃນການຈັດຕັ້ງປະຕິບັດທຸກໆກິດຈະກໍາທີ່ຊຸມຊົນເປັນໃຈກາງ ຈະຕ້ອງເປີດໂອກາດໃຫ້ທັງຍິງ ແລະ ຊາຍເຮັດວຽກຮ່ວມກັນ ແລະ ໃຫ້ຄວາມສໍາຄັນຕໍ່ຄໍາຄິດເຫັນຂອງເຂົາເຈົ້າເທົ່າທຽມກັນ, ແຕ່ບໍ່ໄດ້ໝາຍຄວາມວ່າຜູ້ຍິງ ແລະ ຜູ້ຊາຍຈະຕ້ອງປະກອບສ່ວນ ແລະ ຮັບຜິດຊອບທຸກກິດຈະກໍາເໝືອນກັນໝົດ. ຜູ້ຍິງ ແລະ ຜູ້ຊາຍມີຄວາມຮູ້, ປະສົບການລວມທັງທັກສະທີ່ແຕກຕ່າງກັນ, ເພາະສະນັ້ນ ການປະກອບສ່ວນຂອງຜູ້ຍິງ ແລະ ຜູ້ຊາຍ ຄວນພິຈາລະນາຕາມຄວາມເໝາະສົມ ອີງຕາມຄວາມຕ້ອງການ, ບົດບາດໜ້າທີ່ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າ. ຍົກຕົວຢ່າງ: ໃນວຽກງານການປູກປ່າຄືນໃໝ່, ຜູ້ຍິງ ຮູ້ຈະນິດພັນຕ່າງໆທີ່ຈະປູກໃນປ່າ ແລະ ຄັດເລືອກເບ້ຍໄມ້ໄດ້ດີກວ່າຜູ້ຊາຍ, ສ່ວນຜູ້ຊາຍ ຈະປະກອບສ່ວນໃນການປູກ ແລະ ການປົກປັກຮັກສາປ່າເປັນສ່ວນໃຫຍ່. ໃນວຽກງານການບໍລິຫານຈັດການກອງທຶນພັດທະນາ ຜູ້ຍິງມີຄວາມຊ່ຽວຊານ, ລະອຽດ ແລະ ຄຸ້ມຄອງຮັກສາໄດ້ດີ.

4) **ການຕິດຕາມ-ກວດກາ ແລະ ລາຍງານ:** ຜູ້ຍິງ ແລະ ຜູ້ຊາຍ ຄວນມີສ່ວນຮ່ວມໃນຂະບວນການຕິດຕາມ-ກວດກາ ຕັ້ງແຕ່ເລີ່ມຕົ້ນ ເຊັ່ນ ເລີ່ມແຕ່ການສ້າງກົດລະບຽບເພື່ອຕິດຕາມ ຄວບຄຸມການນໍາໃຊ້ຊັບພະຍາກອນປ່າໄມ້ໃຫ້ມີຄວາມຍືນຍົງ, ການອອກສໍາຫລວດກວດກາປ່າໄມ້ ແລະ ການສ້າງລະບົບການແບ່ງປັນຜົນປະໂຫຍດຈາກປ່າໄມ້ຢ່າງເປັນທໍາ, ນອກຈາກນັ້ນ, ການຕິດຕາມ-ກວດກາຜົນກະທົບຈາກການຄຸ້ມຄອງປ່າໄມ້ ຄວນຈັດຕັ້ງປະຕິບັດໂດຍທັງຜູ້ຍິງ ແລະ ຜູ້ຊາຍ ໂດຍນໍາໃຊ້ເຄື່ອງມື ເພື່ອໃຫ້ເຂົ້າໃຈກ່ຽວກັບວຽກງານບົດບາດຍິງ-ຊາຍ ແລະ ວິທີການເກັບຂໍ້ມູນແຍກເພດ, ແລະ ຄວນປະເມີນຜົນກະທົບບົດບາດຍິງ-ຊາຍ ເພື່ອຕິດຕາມ ແລະ ປະເມີນຜົນການແບ່ງປັນຜົນປະໂຫຍດຈາກປ່າໄມ້.

## ປະເດັນສໍາຄັນ ທີ່ຜູ້ອໍານວຍຄວາມສະດວກ ຄວນຈະນໍາໄປຖ່າຍທອດ:

- ການເຊື່ອມບົດບາດຍິງ-ຊາຍ ບໍ່ແມ່ນພຽງແຕ່ເຮັດໃຫ້ຈໍານວນຜູ້ຍິງເຂົ້າຮ່ວມໃນວຽກງານໃດວຽກງານໜຶ່ງ ເພີ່ມຂຶ້ນເທົ່ານັ້ນ.
- ພິຈາລະນາດ້ານບົດບາດ, ໜ້າທີ່, ຄວາມຮັບຜິດຊອບ, ຜົນປະໂຫຍດ ແລະ ຄວາມຕ້ອງການ , ທັງຜູ້ຍິງ ແລະ ຜູ້ຊາຍ ຈໍາເປັນຕ້ອງເຂົ້າຮ່ວມໃນການພັດທະນາ ແລະ ຈັດຕັ້ງປະຕິບັດການຄຸ້ມຄອງປ່າໄມ້ແບບຍືນຍົງ ເພື່ອຮັບມືກັບການປ່ຽນແປງດິນຟ້າອາກາດ ໃນຂັ້ນຮາກຖານ.

**ໝາຍເຫດ:**

*ເນື້ອໃນແຜ່ນໂຄສະນາ ເປັນພຽງຂໍ້ແນະນໍາສໍາລັບຜູ້ອໍານວຍຄວາມສະດວກຂັ້ນຮາກຖານເທົ່ານັ້ນ. ເພື່ອນໍາໃຊ້ແຜ່ນໂຄສະນານີ້ໃນການຝຶກອົບຮົມຂັ້ນຮາກຖານ, ຜູ້ອໍານວຍຄວາມສະດວກ ສາມາດປັບໃຊ້ໄດ້ຕາມສະຖານະການຕົວຈິງໃນທ້ອງຖິ່ນ.*


ພາລະໜ້າທີ່ຂອງ RECOFTC ແມ່ນເພື່ອຮັບປະກັນສິດທິຂອງປະຊາຊົນທ້ອງຖິ່ນ ໃຫ້ມີຄວາມໝັ້ນຄົງກວ່າເກົ່າ, ການປົກຄອງໄດ້ຮັບການປັບປຸງ ແລະ ປະຊາຊົນທ້ອງຖິ່ນ ໄດ້ຮັບຜົນປະໂຫຍດທີ່ເທົ່າທຽມ ໃນການດັດແປງພື້ນທີ່ປ່າໄມ້ ໃນເຂດພາກພື້ນອາຊີ ແລະ ປາຊີຟິກ ໃຫ້ມີຄວາມຍືນຍົງ.

ການເຊື່ອມບົດບາດຍິງ-ຊາຍເຂົ້າໃນວຽກງານການຄຸ້ມຄອງປ່າໄມ້ແບບຍືນຍົງ



ສະຫງວນລິຂະສິດ © ອົງການ RECOFTC ເດືອນຕຸລາ 2015



ບາງກອກ ປະເທດ ໄທ

ແຕ້ມໂດຍ: ທ່ານນາງ ຈູທາມາສ ປຣະມູນມາກ



ຜູ້ຖືລິຂະສິດທີ່ສະໜອງແຫຼ່ງຂໍ້ມູນຮັບຮູ້ຢ່າງເຕັມທີ່ ແລະ ອະນຸຍາດໃຫ້ພິມຄືນແຜ່ນໂຄສະນາສະບັບນີ້ ເພື່ອຈຸດມຸ້ງໝາຍທາງດ້ານການສຶກສາ ຫຼື ບໍ່ແມ່ນເພື່ອຈຸດມຸ້ງໝາຍທາງດ້ານການຄ້າ ໂດຍບໍ່ຕ້ອງຂຽນຂໍອະນຸຍາດລ່ວງໜ້າຈາກບັນດາຜູ້ຖືລິຂະສິດ. ຫ້າມພິມຄືນແຜ່ນໂຄສະນາສະບັບນີ້ ເພື່ອຂາຍ ຫຼື ຈຸດປະສົງທາງດ້ານການຄ້າອື່ນໆ ໂດຍບໍ່ໄດ້ ຮັບອະນຸຍາດເປັນລາຍລັກອັກສອນຈາກຜູ້ຖືລິຂະສິດ.



ສໍາລັບຂໍ້ມູນລາຍລະອຽດ, ກະລຸນາຕິດຕໍ່
ອົງການ RECOFTC ປະຈໍາ ສປປ ລາວ
ຄຸ້ມທາດດໍາ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ
ໝາຍເລກໂທລະສັບ: 856 21 219512 ເວັບໄຊທ: www.recoftc.org


Norad

THE CENTER FOR PEOPLE AND FORESTS